**ມິຊຊາອາທິດທີ 12 ການົດທຳມະດາປີ A**

**ວັນທີ 21 ມິຖຸນາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 10, 26-33**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວກັບພວກສາວົກວ່າ: "ບໍ່ໃຫ້ພວກເຈົ້າຢ້ານກົວພວກນີ້ເລີຍ; ຍ້ອນວ່າ ບໍ່ມີຫຍັງທີ່ປິດບັງຢູ່ຈະບໍ່ຖືກເປີດເຜີຍ, ແລະບໍ່ມີຫຍັງທີ່ລີ້ລັບ ຈະບໍ່ປາກົດອອກມາໃຫ້ຮູ້ເຫັນ. ສິ່ງທີ່ເຮົາບອກພວກເຈົ້າໃນທີ່ມືດ, ໃຫ້ພວກເຈົ້າກ່າວອອກໃນທີ່ແຈ້ງ; ສິ່ງທີ່ເຮົາຊິ່ມໃສ່ຫູ ໃຫ້ພວກເຈົ້າປະກາດເທິງຫລັງຄາເຮືອນ. ພວກເຈົ້າຢ່າຢ້ານພວກທີ່ຂ້າໄດ້ແຕ່ກາຍ, ແຕ່ບໍ່ສາມາດຂ້າວິນຍານໄດ້. ແຕ່ໃຫ້ຢ້ານຜູ້ທີ່ຈະທຳລາຍທັງກາຍ ແລະວິນຍານໃຫ້ພິນາດ ໃນໄຟນະລົກດີກວ່າ. ລາຄານົກຈອກບໍ່ແມ່ນຄູ່ລະອັດຊັ້ນບໍ ? ເຖິງປານນັ້ນກໍດີ, ບໍ່ມີໂຕໃດຈະຕົກດິນນອກຈາກພຣະບິດາໃຫ້ອະນຸຍາດ. ສຳລັບພວກເຈົ້າເອງ ຜົມທຸກເສັ້ນເທິງຫົວຂອງພວກ ເຈົ້າກໍຖືກນັບໄວ້ແລ້ວ !

ດັ່ງນີ້ ພວກເຈົ້າຢ່າຢ້ານກົວເລີຍ ຍ້ອນພວກເຈົ້າ ແຕ່ລະຄົນ ມີລາຄາຫລາຍກວ່ານົກຈອກທັງຝູງ. ຜູ້ໃດຈະຮັບຮູ້ເຮົາຕໍ່ໜ້າມະນຸດ, ເຮົາກໍຈະຮັບຮູ້ຜູ້ນັ້ນຕໍ່ພຣະພັກ ພຣະບິດາຂອງເຮົາ ຜູ້ສະຖິດຢູ່ສະຫວັນ. ແຕ່ວ່າຜູ້ໃດຈະປະຕິເສດເຮົາຕໍ່ໜ້າມະນຸດ ເຮົາກໍຈະປະຕິເສດຜູ້ນັ້ນ ຕໍ່ພຣະພັກ ພຣະບິດາຂອງເຮົາ ຜູ້ສະຖິດຢູ່ສະຫວັນດ້ວຍ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 10, 26-33**

ວາຈາພຣະເຈົ້າຊຶ່ງພວກເຮົາໄດ້ຟັງວັນນີ້ຢູ່ໃນບໍລິບົດຂອງຄຳແນະນຳສັ່ງສອນຂອງພຣະເຢຊູເຈົ້າຕໍ່ພວກລູກສິດສິບສອງຄົນ ກ່ອນທີ່ພຣະອົງຈະສົ່ງພວກເຂົາໄປທົ່ວໂລກເພື່ອທຳໃຫ້ທຸກຊາດທຸກພາສາໄດ້ມາເປັນສິດຂອງພຣະອົງໂດຍທາງສິນລ້າງບາບ ເດຊະພຣະນາມພຣະບິດາແລະພຣະບຸດແລະພຣະຈິດ (ມທ 28, 19). ສິ່ງທີ່ພຣະເຢຊູເຈົ້າກ່າວກັບພວກລູກສິດໃນວັນນີ້ບໍ່ວ່າຈະເປັນ: ຄວາມຍາກລຳບາກ, ການບຽດບຽນຈົນເຖິງການສະຫລະຊີວິດຂອງຕົນເພື່ອພຣະວໍລະສານເປັນສິ່ງທີ່ພຣະເຢຊູເຈົ້າເອງຜູ້ເປັນອາຈານກຳລັງປະເຊີນໜ້າ ແລະພຣະອົງຈະຕ້ອງສະຫລະຊີວິດຂອງຕົນບົນໄມ້ກາງເຂນເພື່ອໃຫ້ພວກເຮົາໄດ້ຮອດຊີວິດ.

ມີຄຳເວົ້າໜຶ່ງທີ່ພຣະເຢຊູເຈົ້າກ່າວຢ້ຳໄປຢ້ຳມາຫລາຍຄັ້ງໃນພຣະວໍລະສານຕອນນີ້ຄືຄຳວ່າ: "ຢ່າຢ້ານກົວເລີຍ". ໃນຄວາມເປັນມະນຸດບໍ່ວ່າພວກລູກສິດກໍຄືພວກເຮົາທຸກຄົນເມື່ອຮູ້ເຖິງໄພອັນຕະລາຍແລະອຸປະສັກທີ່ຈະເປັນມາກັບຊີວິດຂອງຕົນແມ່ນໃຜທີ່ຈະບໍ່ຢ້ານ? ພຣະເຢຊູເຈົ້າເອງໃນສະພາບເປັນມະນຸດກ່ອນທີ່ພຣະອົງຈະຮັບທໍລະມານແລະຕາຍບົນໄມ້ກາງເຂນພຣະອົງກໍມີຄວາມຢ້ານກົວແລະກ່າວກັບພຣະບິດາວ່າ: "ຂໍໃຫ້ຈອກການລິສນີ້ໜີໄກຈາກລູກເຖີດ! ແຕ່ທັງນີ້ກໍດີຂໍຢ່າໃຫ້ເປັນໄປຕາມນ້ຳໃຈຂອງລູກ, ແຕ່ຂໍໃຫ້ເປັນໄປຕາມນ້ຳພຣະໄທຂອງພຣະບິດາ" (ມທ 26, 39). ວັນນີ້ພຣະເຢຊູເຈົ້າກ່າວກັບພວກລູກສິດວ່າ: "ຢ່າຢ້ານກົວເລີຍ". ໝາຍວ່າພຣະອົງຢາກສອນພວກເຂົາໃຫ້ວາງໃຈໃນຄວາມຮັກແລະການດູແລຂອງພຣະບິດາເຈົ້າ. ຍ້ອນວ່າບໍ່ມີສິ່ງສ້າງໃດໃນໂລກທີ່ພຣະບິດາເຈົ້າຈະບໍ່ດູແລຮັກສາ ແມ່ນແຕ່ນົກຈອກທີ່ບໍ່ມີຄ່າຫຍັງເລີຍພຣະອົງກໍຍັງບໍ່ປະຖິ້ມ. ຍິ່ງກວ່ານັ້ນພວກເຮົາຜູ້ເປັນລູກຂອງພຣະອົງ, ພຣະອົງຈະບໍ່ດູແລຮັກສາພວກເຮົາບໍ?

ຄຳເວົ້າທີ່ພຣະເຢຊູເຈົ້າໄດ້ກ່າວກັບພວກລູກສິດ, ວັນນີ້ພຣະອົງກໍກ່າວກັບພວກເຮົາເຊັ່ນດຽວກັນ "ຢ່າຢ້ານກົວເລີຍ"ເມື່ອພວກເຮົາຕ້ອງພົບກັບບັນຫາຊີວິດ, ການທົດສອບ, ຄວາມຍາກລຳບາກຕ່າງໆຍ້ອນພຣະນາມຂອງພຣະອົງ. ໃຫ້ພວກເຮົາເຊື່ອໝັ້ນວ່າພຣະເຈົ້າຈະບໍ່ປະຖິ້ມພວກເຮົາ. ນີ້ແລແມ່ນຄວາມເຊື່ອແລະກຳລັງໃຈສຳລັບພວກເຮົາຜູ້ເປັນກຣິສຕັງ, ຜູ້ເຊື່ອໃນພຣະເຢຊູເຈົ້າ, ຜູ້ເປັນພິຍານເຖິງພຣະອົງຢູ່ໃນໂລກນີ້. ເຖິງວ່າພວກເຮົາຈະຢູ່ໃນຄວາມຍາກລຳບາກແລະທຸກທໍລະມານປານໃດກໍຕາມ ໃຫ້ພວກເຮົາຮັບຮູ້ວ່າພຣະເຢຊູເຈົ້າເອງກໍໄດ້ຜ່ານຄວາມຍາກລຳບາກນີ້ກ່ອນພວກເຮົາແລະພຣະອົງໄດ້ໄຊຊະນະໂລກແລ້ວ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ